

# ຫ້າງຫາກະກຽມຕໍ່ໄພພິບັດ :
# ພະຍຸໃຕ້ຝຸ່ນ ແລະພະຍຸໄຊໂຄນ


ໃນຕູບໄມ້ນ້ອຍຫຼັງໜຶ່ງ, ໃກ້ກັບຕີນພູ ມູດ
...ຂະນະທີ່ ຕົ້ນກຳລັງນອນຝັນດີຢູ່ ທັນໃດນັ້ນ ສຽງເຕືອນໄພ ກໍໄດ້ປຸກໃຫ້ລາວຕື່ນ.
ຕົ້ນ, ເຈົ້າຕ້ອງອອກໄປດຽວນີ້! ພະຍຸໄຊໂຄນ ກຳລັງມາແລ້ວ!!ເຈົ້າໄດ້ຍິນສຽງເຕືອນບໍ່?
ຝົນຕົກແຮງອາດຈະເຮັດ ໃຫ້ດິນເຊາະເຈື່ອນໃດ!!!
ອາ-ໂອ!!
ແລະ ລົມແຮງກໍ່ສາມາດ ທຳລາຍຕູບໄມ້ນີ້ໃດ!
ເຈົ້າຄວນອອກຈາກນີ້ກ່ອນທີ່ ພະຍຸໄຊໂຄນຈະມາໃດ!
ເອົາສິ່ງຂອງທີ່ຈຳເປັນຄື: ນ້ຳ ແລະ ອາຫານ ໃສ່ກະເປົ໋າໄວ້
ຖ້າເຈົ້າມີເສື້ອກັນຝົນ ກໍ່ນຸ່ງເລີຍເດີ!
ຖອດປັກສຽບເຄື່ອງໃຊ້ໄຟຟ້າທຸກ ຊະນິດ ແລະ ປິດນ້ຳ-ປິດແກັສ ແດ່ເດີ.
ແລ້ວຕົງມາເຮືອນຂ້ອຍເລີຍເດີ ຕົ້ນ, ຢູ່ນີ້ຈະປອດໄພດີກວ່າ
ຂອບໃຈ ຟ້າ
ລະວັງຕົວເດີ ຕົ້ນ, ຟັງສຽງແປກໆໄວ້
ແມ່ນແລ້ວ, ຫຼືວ່າສຽງ ກ້ອນຫີນຕຳກັນ ແດ່
ຄືສຽງງ່າໄມ້ຫັກບໍ່?
ຖ້າໄດ້ຍິນເຊັ່ນນັ້ນ ໃຫ້ ອອກຈາກບ່ອນນັ້ນທັນທີ



ຈາກນັ້ນ, ພວກເຂົາກໍ່ໄດ້ຂີ່ລົດ
ຖີບກັບເມືອເຮືອນຂອງຟ້າ
ຟ້າ ແລະ ຕົ້ນ ກຳລັງປິດປ່ອງຢ້ຽມ ແລະ
ເອົາກະສອບຊາຍເຕັ່ງຫຼັງຄາເອົາໄວ້
ຟ້ານຳເອົາສິ່ງຂອງນ້ອຍໆທີ່ອາດຈະ
ປິວໄດ້ ແລະ ແມວຂອງລາວ
ເຂົ້າໄວ້ໃນເຮືອນ
ແມ່ວ
ຟ້າກຳລັງເກັບສິ່ງຂອງໃນຫ້ອງໃຫ້
ເປັນລະບຽບດີ ກ່ອນອອກເຮືອນໄປ
ແປ້ນໄມ້ເຫຼົ່ານີ້ຈະສາມາດປ້ອງກັນສິ່ງໃດ
ກໍ່ຕາມທີ່ປິວຈະເຂົ້າມາທາງປ່ອງຢ້ຽມ
ໄວໆ, ຮີບເຂົ້າໄປໃນເຮືອນກ່ອນ
ທີ່ພະຍຸໄຊໂຄນຈະເລີ່ມມາ
ຂອບໃຈເດີ ຟ້າ!
ເຈົ້າເກັ່ງຫຼາຍ
ເຈົ້າເຮັດຫຍັງຢູ່
ກຳລັງເກັບສິ່ງຂອງມີຄ່າໃສ່ຖົງຢາງ
ແລະ ເກັບໄວ້ບ່ອນສູງ
ຂ້ອຍຈະຊ່ວຍເຈົ້າຍ້າຍໂທ
ລະພາບໄວ້ບ່ອນສູງຄືກັນ
ຂອບໃຈຕົ້ນ
ດຽວນີ້ເຮືອນຂອງພວກເຮົາຮັບ
ປະກັນແລ້ວ ພວກເຮົາຕ້ອງຖ້າຢູ່ໃນ
ເຮືອນຈົນກ່ວາພະຍຸຈະເຊົາ
ເປັນຄວາມ
ຄິດທີ່ດີຫຼາຍ!!
ຄຣາກ!!
ຄຣາກ!!
ສຽງຄືພະຍຸໄຊ
ໂຄນມາຮອດແລ້ວ!
ຈື່ໄດ້ບໍ່ ຕົ້ນ,
ປອດໄພໄວ້ກ່ອນ
ດຽວນີ້ ຂ້ອຍບໍ່ຢ້ານແລ້ວ

## ຂ້າງລຸ່ມນີ້ແມ່ນຄຳເຕືອນເພື່ອສຳນຶກກ່ຽວກັບການປະຕິບັດຕໍ່ພະຍຸໄຕ້ຝຸ່ນ. ສຶກສາໃຫ້ດີ! ຈະເຮັດໃຫ້ເຫັນຄວາມແຕກຕ່າງໄດ້!

- ຕ້ອງຮັບປະກັນວ່າທຸກຄົນໃນຄອບຄົວຂອງທ່ານຮູ້ວ່າຈະອົບພະຍົບໄປຢູ່ໃສ ແລະ ດ້ວຍວິທີໃດ
- ປະກອບສ່ວນເຂົ້າໃນການສ້າງແຜນທີ່ເຂດສ່ຽງໄພ ແລະ ການວາງແຜນການກະກຽມສຳລັບພະຍຸໄຊໂຄນ ຢູ່ບ່ອນທີ່ເຈົ້າອາໄສຢູ່
- ເກັບຮັກສາເອກະສານທີ່ສຳຄັນ ແລະ ມີສິ່ງຂອງຄ່າ ເອົາໄວ້ໃນຖົງທີ່ກັນນ້ຳໄດ້ ແລະ ເກັບມ້ຽນໄວ້ບ່ອນສູງ
- ກວດກາ ແລະ ສ້ອມແປງຫຼັງຄາຂອງທ່ານ ກ່ອນລະດູການຂອງພະຍຸໄຊໂຄນຈະມາ. ສຳລັບຫຼັງຄາທີ່ມີນ້ຳໜັກເບົາ, ຕ້ອງໄດ້ໃຊ້ກະສອບຊາຍເຕັ່ງໄວ້
- ຖ້າທ່ານຄິດວ່າທ່ານຢູ່ໃນພາວະອັນຕະລາຍ, ທ່ານຄວນອົບພະຍົບຫ່າງອອກໄປຈາກທິດທາງທີ່ພະຍຸເຄື່ອນເຂົ້າມາທັນທີ
- ປິດໄຟຟ້າ, ປິດເຕົາແກັສ, ປິດກ໋ອກນ້ຳ ແລະ ຖອດປັກສຽບເຄື່ອງໃຊ້ໄຟຟ້າທຸກຊະນິດ
- ກວດກາເບິ່ງເຄື່ອງໃຊ້ໃນການອົບພະຍົບຂອງທ່ານ ແລະ ກະເປົາເດີນທາງໃຫ້ຮຽບຮ້ອຍ
- ຕ້ອງມີນ້ຳ ແລະ ອາຫານ ພ້ອມ
  ສາກແບັດໂທລະສັບມືຖືໃຫ້ຮຽບຮ້ອຍ
- ຖ້າທ່ານອາໄສຢູ່ໃກ້ຝັ່ງ, ເຂດທີ່ນ້ຳສາມາດຖ້ວມເຖິງໄດ້ງ່າຍ, ເຂດໃກ້ແມ່ນ້ຳ ຫຼື ບ່ອນໂລ່ງແຈ້ງ ຫຼື ຢູ່ໃນເຮືອນທີ່ມີໂຄງສ້າງບໍ່ແຂງແຮງ ທ່ານຈຳເປັນຕ້ອງໄດ້ອົບພະຍົບໂດຍຮີບດ່ວນ
- ທ່ານບໍ່ຄວນອົບພະຍົບໃນຂະນະທີ່ເກີດພະຍຸໄຊໂຄນ



ຮຽນຮູ້ເພີ່ມເຕີມກ່ຽວກັບໄພພິບັດກະລຸນາເຂົ້າເບິ່ງ:
*www.redcross.org/prepare/disaster/hurricane*


ອົງການກາແດງລາວ ສູນກາງ ຖະໜົນເສດຖາທິລາດ, ຮ່ອມວັດຊຽງຍືນ

ຕູ້ ປ ນ 650

ນະຄອນຫຼວງວຽງຈັນ, ສປປ ລາວ

Tel: +(856 21) 216610, 253014

Fax: +(856 21) 212128, 253014



ເຮັດໃຫ້ເປັນໄປໄດ້ດ້ວຍການສະໜັບສະໜູນຂອງ

ຊ່ວຍເຫຼືອດ້ານມະນຸດສະທຳ ແລະ ປົກປ້ອງພົນລະເຮືອນ

International Federation of Red Cross and Red Crescent Societies

CANADIAN RED CROSS

日本赤十字社 Japanese Red Cross Society

Norwegian **Red Cross**